# ທະນາຄານແຫ່ງ ສປປ ລາວ ຈັດຕັ້ງການເຜີຍແຜ່ມູນເຊື້ອກຳມະບານລາວ





ວັນທີ 2 ກຸມພາ 2012 ທະນາຄານແຫ່ງ ສປປ ລາວ ໄດ້ຈັດຕັ້ງການທວນຄືນມູນເຊື້ອວັນສ້າງຕັ້ງສະຫະພັນກໍາມະບານລາວຄົບຮອບ 56 ປີ (1/2/1956-1/2/2012) ໂດຍການໃຫ້ກຽດປາຖະກະຖາຂອງທ່ານ ຄໍາຫຼ້າ ລໍລອນສີ ກໍາມະການສູນກາງພັກ, ປະທານສູນກາງສະຫະພັນກໍາມະບານລາວ ເຊິ່ງກ່ອນໜ້າຂອງການເຜີຍແຜ່ມູນເຊື້ອດັ່ງກ່າວ ທ່ານປະທານສູນກາງສະຫະພັນກໍາມະບານລາວກໍໄດ້ຮັບການຕ້ອນຮັບຢ່າງອົບອຸ່ນຈາກທ່ານ ສົມພາວ ໄຟສິດ ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ທີ່ຫ້ອງຮັບແຂກ, ຈາກນັ້ນໃນເວລາຕໍ່ມາທ່ານປະທານສູນກາງສະຫະພັນກໍາມະບານລາວ ກໍໄດ້ໃຫ້ກຽດເຜີຍແຜ່ພາຍໃຕ້ຫົວຂໍ້ "ຂະບວນວິວັດແຫ່ງການກໍາເນີດແລະເຕີບໃຫຍ່ຂະຫຍາຍຕົວຂອງອົງການຈັດຕັ້ງກໍາມະບານລາວ, ພ້ອມນີ້ກໍມີການເຂົ້າຮ່ວມຂອງທ່ານ ສອນໄຊ ສິດພະໄຊ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ບັນດາຄະນະພັກ, ພະນັກງານການນໍາ, ບັນດາຄະນະກໍາມະບານຮາກຖານ ແລະ ສະມາຊິກກໍາມະບານເຂົ້າຮ່ວມຢ່າງພ້ອມພຽງ.

ໃນໂອກາດດັ່ງກ່າວທ່ານ ຄໍາຫຼ້າ ລໍລອນສີ ກໍາມະການສູນກາງພັກ, ປະທານສູນກາງສະຫະພັນກໍາມະບານລາວ ກໍໄດ້ຍົກໃຫ້ເຫັນປະຫວັດຄວາມເປັນມາ, ການເຕີບໃຫຍ່ຂະຫຍາຍຕົວຂອງອົງການຈັດຕັ້ງກໍາມະບານລາວ, ເຫັນໄດ້ມູນເຊື້ອ, ຜົນງານທີ່ອົງການກໍາມະບານໄດ້ປະກອບສ່ວນເຂົ້າໃນພາລະກິດປົດປ່ອຍຊາດ ແລະ ການປະຕິບັດສອງໜ້າທີ່ຍຸດທະສາດຂອງພັກຄື: ປົກປັກຮັກສາ ແລະ ສ້າງສາພັດທະນາລະບອບໃໝ່ຕະຫຼອດໄລຍະ 56 ປີ ໂດຍພາຍໃຕ້ການຊີ້ນໍານໍາພາຂອງພັກທີ່ມີກຽດສະຫງ່າ ອັນໄດ້ເຮັດໃຫ້ພະນັກງານການນໍາ, ພະນັກງານວິຊາການ, ລັດຖະກອນ ແລະ ສະມາຊິກກໍາມະບານໃນທົ່ວລະບົບທະນາຄານໄດ້ຮັບຮູ້-ເຂົ້າໃຈ, ນໍາໄປເຜີຍແຜ່ ແລະ ເສີມຂະຫຍາຍມູນເຊື້ອດັ່ງກ່າວເຂົ້າໃສ່ຊີວິດຕົວຈິງໃຫ້ເກີດດອກອອກຜົນໃນຕໍ່ໜ້າ.